*Souphanouvong University Journal of Multidisciplinary Research and Development*
2024, Vol.9. No. 1, 90-99
https://doi.org/10.69692/SUJMRD090190

# Jobs-Housing Balance Dimension in the New Resettlement Areas Affected by the Hydropower Construction Project
## Case of: Samavkhyxay Village, Xieng Ngeun District, Luang Prabang Province

**Beeno VORRABOUTH[1], Thanusorn VONGPRASEUTH[2,*], Sinthavone Daravong[3]**
*Faculty of Architecture, National University of Laos, Lao PDR*

**[2*]*Correspondence:***
*Thanousorn Vongpraseuth, Urban Development and Built Environment Lab, Faculty of Architecture, National University of Laos,*
*Tel: +856 20 55622836,*
*E-mail: th.vongpraseuth@nuol.edu.la*
*[1]Engineering Studies and Design, Lao EDL Institute, EDL, Ministry of Energy and Mine*
*[3]Faculty of Architecture, National University of Laos*

***Article Info:***
*Submitted: Jan 06, 2023*
*Revised: Jan 31, 2023*
*Accepted: Feb 13, 2023*

**Abstract**

This study was conducted in Samackhysay Village, Xiengngun District, Luang Prabang Province, emphasizing the dimension of jobs-housing balance in the new resettlement areas of residents affected by the hydropower construction project and the resettlement process. 655 households have been moved from 10 villages. The methodology of the study employed a questionnaire with 250 households. The quantitative and qualitative approaches have been utilized with Binary Logistic Model in order to examine the relationships between housing and workplaces/balancing dimensions. Results of this study revealed that after the resettlement was completed, there are some positive and negative impacts illustrated, for instance, the community-level infrastructure has been updated with roads, schools, clinics, electricity, and water supply for the positive manners. Regarding the negative image, people are hard adapting to the new environment, the shortage of agricultural land and workplaces have been located far away from their residences, and their expenses increased with their longer trips to workplaces. The results also confirmed that the imbalance factor between jobs-housing is a crucial dimension of the resettlement of new locations. The Logistic Model revealed some critical issues regarding the inequalities of ethnicity, location of the original village, level of education, occupation, distance to the workplace, income, and conditions of homes and vehicles. The obvious change is that new occupations in the new resettlement area are workers compared to farmers. The outcomes of the study can be used as a guideline for creating a balance between housing and workplaces, especially the allocation of agricultural areas and the provision of occupations that are appropriate for the people to create a balance, to become the model village for the development and sustainability in the future.

**Keywords:** *jobs-housing balance, resettlement, dam developmen*

## 1. ພາກສະເໜີ

ພາຍຫຼັງທີ່ປະເທດຊາດໄດ້ຮັບການປົດປ່ອຍ ແລະ ສະຖາປະນາເປັນປະເທດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ລັດຖະບານໄດ້ສຸມທຸກຄວາມພະຍາຍາມເຂົ້າໃນການປົວແປງ ຜົນໄດ້ຮັບຈາກບາດແຜສົງຄາມ, ພັດທະນາເສດຖະກິດ-ສັງຄົມ ເພື່ອຍົກສູງຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ, ສ້າງພື້ນຖານເສດຖະກິດເຕັກນິກ, ພັດທະນາເສດຖະກິດຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ອັນສຳຄັນທີ່ສຸດແມ່ນຮັບປະກັນຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ໂດຍການວາງແຜນທີ່ນັບມື້ມີການພັດທະນາ ແລະ ມີຫົວຄິດປະດິດສ້າງໃຫ້ສອດຄ່ອງກັບຈຸດພິເສດ, ລັກສະນະ ແລະ ເງື່ອນໄຂຂອງແຕ່ລະຍຸກສະໄໝ ເຊິ່ງສະແດງໃຫ້ເຫັນໃນການວາງແຜນການປົວແປງບາດແຜສົງຄາມ, ແຜນຟື້ນຟູ ແລະ ປົວແປງຊີວິດການເປັນຢູ່ຊອງປະຊາຊົນບັນດາເຜົ່າ (ສະພາແຫ່ງຊາດ, 2017), ແຜນພັດທະນາເສດຖະກິດສັງຄົມໃນແຕ່ລະໄລຍະ ເຊັ່ນ: ແຜນ

ພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ I (1981-1985), ຄັ້ງທີ II (1986-1990) , ຄັ້ງທີ III (1991-1995) , ຄັ້ງທີ IV (1996-2000) , ຄັ້ງທີ V (2001-2005) , ຄັ້ງທີ VI (2006-2010) , ຄັ້ງທີ VII (2011-2015) ແລະ ປັດຈຸບັນນີ້ແມ່ນຢູ່ໃນແຜນພັດທະນາເສດຖະກິດຄັ້ງທີ VIII (2016-2020) ເພື່ອຮັບປະກັນໃຫ້ບັນລຸພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ (ກະຊວງແຜນການ ແລະ ການລົງທຶນ, 2015), ສູ້ຊົນນຳພາປະເທດ ໃຫ້ຫຼຸດພົ້ນອອກຈາກສະຖານະຄວາມດ້ອຍພັດທະນາ ໂດຍແຕ່ລະໄລຍະຂອງການວາງແຜນແມ່ນໄດ້ກຳນົດຈຸດປະສົງ, ເປົ້າໝາຍ, ແຜນງານ, ໂຄງການ, ນະໂຍບາຍ ແລະ ມາດຕະການຈັດຕັ້ງປະຕິບັດ ເພື່ອຮັບປະກັນໃຫ້ມີຄວາມສະຫງົບທາງດ້ານສັງຄົມ, ມີສະຖຽນລະພາບທາງດ້ານການເມືອງ ແລະ ເຮັດໃຫ້ເສດຖະກິດຂະຫຍາຍຕົວຢ່າງຕໍ່ເນື່ອງໂດຍໄດ້ມີການວາງຍຸດທະສາດອອກມາ ໂດຍສະເພາະ ຍຸດທະສາດການຫັນເປັນອຸດສາຫະກຳ ແລະ ທັນສະໄໝ, ຍຸດທະສາດການເຕີບໂຕ ແລະ ຫຼຸດຜ່ອນຄວາມທຸກຍາກແຫ່ງຊາດ, ຍຸດທະສາດການພັດທະນາເຂດພາກເໜືອ; ນອກນີ້ຍັງມີບາງນິຕິກຳຕ່າງໆ ເພື່ອຮັບປະກັນໃຫ້ແກ່ວິໄສທັດ 2020 ຂອງລັດຖະບານ ຄືການນຳເອົາປະເທດຊາດຫຼຸດພົ້ນອອກຈາກຄວາມດ້ອຍພັດທະນາ, ລັດຖະບານໄດ້ຕີລາຄາສູງຕໍ່ຄວາມສຳຄັນຂອງການເຊື່ອມໂຍງກັບພາກພື້ນ ແລະ ເລັ່ງໃສ່ການພັດທະນາໃຫ້ ສປປ ລາວ ກາຍເປັນປະເທດເຊື່ອມໂຍງທາງດ້ານເສດຖະກິດ ພ້ອມທັງຍາດແຍ່ງເອົາການລົງທຶນຂອງຕ່າງປະເທດເຂົ້າມາໃສຂະແໜງທີ່ເປັນທ່າແຮງຂອງປະເທດເປັນຕົ້ນ: ບໍ່ແຮ່, ໄຟຟ້າ ເພື່ອພັດທະນາ ສປປ ລາວ ໃຫ້ກາຍເປັນໝໍ້ໄຟຂອງອາຊຽນ. ສະນັ້ນໃນຊ່ວງນີ້ການພັດທະນາດ້ານພະລັງງານຈຶ່ງເກີດຂຶ້ນເປັນຈຳນວນຫຼວງຫຼາຍ ໂດຍສະເພາະການພັດທະນາດ້ານພະລັງງານນ້ຳ ເຊິ່ງສະແດງໃຫ້ເຫັນຢູ່ໃນ ຕາຕາລາງ 1 ກຳລັງຕິດຕັ້ງເຂື່ອນໄຟຟ້ານ້ຳຕົກໃນແຕ່ລະໄລຍະ ສະແດງໃຫ້ເຫັນການເພີ່ມຂຶ້ນຂອງໂຄງການພັດທະນາພະລັງງານນ້ຳ ນັບແຕ່ໄລຍະຊ່ວງປີ 1991-2000, ໂດຍສະເພາະຊຸມປີ 2006-2010 ການພັດທະນາການກໍ່ສ້າງເຂື່ອນແມ່ນໄດ້ເພີ່ມຂຶ້ນຢ່າງໄວວາ (ລັດວິສາຫະກິດໄຟຟາລາວ, 2012, 2017ກ ແລະ 2017ຂ). ແລະ ໄດ້ເພີ່ມຂຶ້ນມາແບບກ້າວກະໂດດຂັ້ນຫຼາຍ. ພະລັງງານໄຟຟ້າເປັນສິ່ງຈຳເປັນ ແລະ ເປັນປັດໄຈໜຶ່ງທີ່ສຳຄັນ ສຳລັບການພັດທະນາພື້ນຖານໂຄງລ່າງ ທາງດ້ານເສດຖະກິດ ແລະ ສັງຄົມຂອງຊາດ. ການພັດທະນາແຫຼ່ງພະລັງງານໄຟຟ້າ ນັບວ່າເປັນກົນໄກອັນໜຶ່ງທີ່ລັດຖະບານຖືເປັນບຸລິມະສິດສູງ, ອີກດ້ານໜຶ່ງການພັດທະນາຂະ ແໜງການນີ້ກໍ່ເພື່ອປັບປຸງມາດຕະຖານຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນເທື່ອລະກ້າວ, ພ້ອມທັງເປັນການ ຕອບສະໜອງ ຄວາມຮຽກຮ້ອງ ຕ້ອງການດ້ານພະລັງງານໄຟຟ້າໃຫ້ພຽງພໍກັບແຜນການພັດທະນາເສດຖະກິດ-ສັງຄົມ ໃຫ້ມີຄວາມເຂັ້ມແຂງ ແລະ ເພື່ອໃຫ້ສອດຄ່ອງກັບນະໂຍບາຍຂອງພັກ-ລັດຖະບານ ທີ່ໄດ້ວາງໄວ້ໃນແຜນການດຳເນີນງານໃນໄລຍະ 10 ປີ (2010-2020), ໃຫ້ປະຊາຊົນລາວມີໄຟຟ້າຊົມໃຊ້ໃນຄົວເຮືອນທົ່ວປະເທດກວມອັດຕາສ່ວນ 80% ໃນປີ 2015 ແລະ 90% ໃນປີ 2020. ຍ້ອນເງື່ອນໄຂທີ່ວ່າປະເທດລາວເຮົາອຸດົມສົມບູນໄປດ້ວຍຊັບພະຍາກອນແຫຼ່ງນ້ຳທຳມະຊາດ ທີ່ມີຄວາມເໝາະສົມ ໃຫ້ແກ່ການພັດທະນາແຫຼ່ງຜະລິດພະລັງ ງານໄຟຟ້າແບບໝັ້ນຄົງ ແລະ ຍືນຍົງ.

ປັດຈຸບັນ ປະເທດລາວມີແຫຼ່ງຜະລິດພະລັງງານໄຟຟ້າທັງໝົດ 61 ແຫ່ງ ລວມກຳລັງການຕິດຕັ້ງ 7,207.24 ເມກາວັດ ສາມາດຜະລິດພະລັງງານໄຟຟ້າໄດ້ 37,366.66 ກິກາວັດໂມງຕໍ່ປີ ໃນນີ້ ມີເຂື່ອນຜະລິດກະແສໄຟຟ້າຂະໜາດກາງຫາໃຫຍ່ 32 ແຫ່ງ ເຂື່ອນຂະໜາດນ້ອຍ 15 ເມກາວັດລົງມາມີ 21 ແຫ່ງ ໄຟຟ້າຖ່ານຫີນ 1 ໂຄງການ ໄຟຟ້າພະລັງງານທົດແທນ 2 ແຫ່ງ ແລະ ໂຄງການໄຟຟ້າແສງຕາເວັນ 5 ແຫ່ງ ພ້ອມນີ້ ຍັງມີໂຄງການກໍ່ສ້າງແຫຼ່ງຜະລິດພະລັງງານໄຟຟ້າທີ່ພວມດຳເນີນການກໍ່ສ້າງ ແລະ ຄາດວ່າຈະສຳເລັດປີ 2019-2020 ຈຳນວນ 36 ໂຄງການ ມີກຳລັງຕິດຕັ້ງ 4,184.10 ເມກາວັດ ສາມາດຜະລິດພະລັງງານໄດ້ 20,892.99 ກິກາວັດໂມງຕໍ່ປີຈາກຂໍ້ມູນຈາກບົດສະຫຼຸບແຜນພັດທະນາດ້ານພະລັງງານຂອງກະຊວງພະລັງງານ ແລະ ບໍ່ແຮ່ (ກະຊວງພະລັງງານ ແລະ ບໍ່ແຮ່, 2018) ແລະ ຜ່ານການປະກອບຄຳເຫັນແລກປ່ຽນບົດຮຽນຈາກຫຼາຍພະແນກໜ່ວຍງານ ເຫັນວ່າຜົນສຳເລັດຂອງບັນດາໂຄງການພັດທະນາອຸດສາຫະກຳໄຟຟ້າຢູ່ປະເທດເຮົາ ໃນໄລຍະຜ່ານມາ ມີຄວາມສຳຄັນ ມີລັກສະນະເປັນພື້ນທີ່ໜັກແໜ້ນໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມຂອງປະເທດ ແຕ່ການພັດທະນາອຸດສາຫະກຳພະລັງງານ ກໍຄື ການດຳເນີນກິດຈະການກໍ່ສ້າງ ແລະ ຕິດຕັ້ງໄຟຟ້າຍັງມີຈຸດອ່ອນ ແລະ ຂໍ້ຄົງຄ້າງຫຼາຍດ້ານ ທີ່ຈະຕ້ອງເອົາໃຈໃສ່ປັບປຸງແກ້ໄຂ ໃຫ້ສອດຄ່ອງກັບສະພາບຕົວຈິງ. ໂດຍສະເພາະບັນຫາຜົນກະທົບຕໍ່ສິ່ງແວດລ້ອມ-ສັງຄົມໃນທຸກຂົງເຂດການພັດທະນາ ບໍ່ວ່າຈະເປັນການລົງທຶນທາງພາກລັດ ແລະ ເອກະຊົນ ກໍ່ລ້ວນແລ້ວແຕ່ໄດ້ສ້າງຜົນກະທົບທີ່ຕາມມາເຊັ່ນ: ການຍົກຍ້າຍປະຊາຊົນອອກຈາກພື້ນທີ່ໂຄງການ ແລະ ຈັດສັນທີ່ຢູ່ອາໄສໃໝ່ໃຫ້ກັບປະຊາຊົນ(ສະພາແຫ່ງຊາດ, 2012 ແລະ 2016). ເຊິ່ງຈຸດປະສົງຂອງການຄົ້ນຄວ້າ ແມ່ນເພື່ອສຶກສາຂະບວນການ

ຈັດສັນ-ຍົກຍ້າຍບ້ານທີ່ໄດ້ຮັບຜົນກະທົບຈາກການກໍ່ສ້າງເຂື່ອນໂດຍທົ່ວໄປຄຽງຄູ່ກັບການສຶກສາຄວາມສົມດຸນລະຫວ່າງບ່ອນເຮັດວຽກ ແລະ ທີ່ຢູ່ອາໄສຢູ່ໃນເຂດຈັດສັນໃໝ່ຂອງປະຊາຊົນທີຖືກຜົນກະທົບຈາກໂຄງການກໍ່ສ້າງເຂື່ອນໄຟຟ້າ.

ໃນບັນດາປະເທດ ທີ່ພັດທະນາແລ້ວ ແມ່ນໄດ້ພິຈາລະນາເປັນພິເສດສະເພາະຄວາມສົມດູນລະຫວ່າງ ອາຊີບ ແລະ ທີ່ຢູ່ອາໄສ ເພື່ອເປັນແຜນຍຸດທະສາດໃນການພັດທະນາ (Gary, 2001). ດັ່ງນັ້ນ, ເພື່ອເປັນການພັດທະນາແບບຍືນຍົງ ຂອງໂຄງການສ້າງເຂື່ອນ ແລະ ຍົກຍ້າຍ ເພື່ອຕັ້ງຖິ່ນຖານ ຈຶ່ງມີຄວາມຈຳເປັນຕ້ອງໄດ້ດຳເນີນການຄົ້ນຄວ້າແຕ່ລະໄລຍະ ເຊິ່ງຈະລົງເລິກກ່ຽວກັບມິຕິດ້ານທີ່ຢູ່ອາໄສ ແລະ ອາຊີບໃນຊຸມຊົນຄືກັນກັບປະສົບການຂອງຫຼາຍປະເທດ ທີ່ຕ້ອງພິຈາລະນາປັດໄຈດ້ານຄວາມສົມດູນ ທີ່ຈະເຮັດໃຫ້ກາຍເປັນຊຸມຊົນໜ້າຢູ່ ແລະ ຍືນຍົງ (City of Boulder Planning Department, 2002; Charles & Ben, 2017)

## 2. ອຸປະກອນ ແລະ ວິທີການ

ການສຶກສາໃນສ່ວນນີ້ຈະສຶກສາສະພາບຂອງການພັດທະນາທີ່ຢູ່ອາໄສ ແລະ ສະຖານທີ່ເຮັດວຽກໃນພື້ນທີ່ຈະມີການສຶກສາ ໂດຍສຶກສາສະພາບທົ່ວໄປຂອງພື້ນທີ່ເຊັ່ນ: ປະຊາກອນ, ລະບົບພື້ນຖານໂຄງລ່າງ, ການຄົມມະນາຄົມຂົນສົ່ງ, ພື້ນຖານທາງດ້ານເສດຖະກິດ ແລະ ວັດທະນະທຳສັງຄົມ ເພື່ອໃຫ້ເກີດຄວາມເຂົ້າໃຈສະພາບການພັດທະນາຂອງພື້ນທີ່ ໃນດ້ານຂອງການພັດທະນາທີ່ຢູ່ອາໄສໃນພື້ນທີ່ຈະສຶກສາ, ຄວາມໜາແໜ້ນ, ການກະຈາຍຕົວຂອງທີ່ຢູ່ອາໄສ, ການເພີ່ມຂຶ້ນຂອງປະຊາກອນ ແລະ ປັດໄຈທີ່ເປັນການສົ່ງເສີມການພັດທະນາທີ່ຢູ່ອາໄສ ໃຫ້ມີຄວາມສອດຄ່ອງກັບສະພາບການຂາຍຫຍາຍຕົວຂອງເສດຖະກິດ-ສັງຄົມໃນປັດຈຸບັນ ເພື່ອເປັນພື້ນຖານທີ່ສຳຄັນເພື່ອໃຫ້ເກີດຄວາມເຂົ້າໃຈ ໃນສ່ວນທີ່ກ່ຽວຂ້ອງກັບສະພາບການພັດທະນາທີ່ຢູ່ອາໄສ ແລະ ສະຖານທີ່ເຮັດວຽກໃນພື້ນທີ່ ເພື່ອນຳໄປສູ່ການວິເຄາະຫາຄວາມສົມດຸນລະຫວ່າງທີ່ຢູ່ອາໄສ ແລະ ສະຖານທີ່ເຮັດວຽກທີ່ຈະສຶກສາໃນຂັ້ນຕອນຕໍ່ໄປນີ້.

ວິທີການ ແລະ ຂັ້ນຕອນການເກັບກຳຂໍ້ມູນແມ່ນໄດ້ອີງໃສ່ການການເກັບກຳ ຈາກແບບສອບ ຖາມເປັນຫຼັກ. ການນຳໃຊ້ສູດໃນການຊຸ່ມຕົວຢ່າງກຸ່ມປະຊາກອນແມ່ນໄດ້ກຳນົດເອົາສູດຂອງ Taro Yamane (1969) ແລະ ໄດ້ຈຳນວນ 250 ຄົວເຮືອນ ເປັນກຸ່ມຕົວຢ່າງ. ຂໍ້ມູນມືສອງ ແມ່ນເອກະສານ ແລະ ນິຕິກຳທີ່ກ່ຽວຂ້ອງກັບການສຶກສາເຊັ່ນ: ບົດລາຍງານຂອງບ້ານ, ບົດລາຍງານແຜນການຕິດຕາມ-ກວດກາ ຂອງໂຄງການຍົກຍ້າຍຈັດສັນບ້ານສາມັກຄີໄຊ, ບົດສຶກສາຜົນກະທົບດ້ານສິ່ງແວດລ້ອມສັງຄົມຂອງໂຄງການ, ແຜນນະໂຍບາຍການຈັດສັນ-ຍົກຍ້າຍ, ການຟື້ນຟູຊີວິດການເປັນຢູ່ໃນໄລຍະຂ້າມຜ່ານຂອງການເລີ່ມຕົ້ນຊີວິດໃໝ່ໃນຂົງເຂດດັ່ງກ່າວ ແລະ ບົດລາຍງານອື່ນໆທີ່ມີສ່ວນພົວພັນກັບຂະບວນການຍົກຍ້າຍຈັດສັນບ້ານສາມັກຄີໄຊ ເມືອງຊຽງເງິນ ແຂວງຫຼວງພະບາງ. ນອກຈາກນັ້ນ ກໍ່ໄດ້ມີການລົງສຳຫຼວດຕິດຕາມໂດຍການສຳພາດຈາກຜູ້ອາວຸໂສ ແລະ ການນຳຈາກພາກລັດ ໂດຍສະເພາະແມ່ນເຈົ້າເມືອງ, ນາຍບ້ານ ແລະ ປະຊາຊົນທີ່ອາໄສຢູ່ໃນເຂດພື້ນທີ່ສຶກສາ ເພື່ອນຳມາວິເຄາະໃນຮູບແບບເຊີງຄຸນນະພາບ ແລ້ວມາປຽບທຽບກັບການວິເຄາະໃນເຊີງປະລິມານ. ຫຼັງຈາກເກັບກຳຂໍ້ມູນທັງແບບປະລິມານ ແລະ ຄຸນນະພາບມາແລ້ວຈະໄດ້ໃຊ້ເຄື່ອງມືໃນການປ້ອນຂໍ້ມູນຊ່ວຍເຂົ້າໃນການວິເຄາະເຊັ່ນ: IBM SPSS Statistic Version 16.0 (ໃຊ້ໃນການວິເຄາະຂໍ້ມູນໃນຮູບແບບການໃຊ້ສະຖິຕິ), Autocad 2018 (ໃຊ້ໃນການແຕ້ມແຜນທີ່, ແຜນຜັງຂອງບ້ານປະກອບໃສ່ບົດ ແລະ GIS Arcmap 10.3.1 (ໃຊ້ໃນການແຕ້ມແຜນທີ່ອ່າງເກັບນ້ຳ, ລະດັບນ້ຳຖ້ວມ)

ພາຍຫຼັງການລົງເກັບກຳຂໍ້ມູນເປັນທີ່ຮຽບຮ້ອຍແລ້ວຂັ້ນຕອນຕໍ່ໄປແມ່ນ ຂັ້ນຕອນຂອງການວິເຄາະຂໍ້ມູນ ໂດຍການວິເຄາະຂໍ້ມູນຈາກແບບສອບຖາມ ສຳລັບການນຳໃຊ້ສະຖິຕິພັນລະນາແມ່ນຈະໄດ້ ນຳໃຊ້ເຂົ້າໃນການອະທິບາຍຜົນຂອງຂໍ້ມູນພື້ນຖານຂອງການວິໃຈເຊັ່ນ: ເພດ, ອາຍຸ, ຊົນເຜົ່າ, ລະດັບການສຶກສາ,ອາຊີບ, ລາຍຮັບ, ລາຍຈ່າຍ, ໄລຍະທາງໄປຫາສະຖານທີ່ເຮັດວຽກ ແລະ ສະຖານທີ່ເຮັດວຽກເປັນຕົ້ນ. ການນຳໃຊ້ສະຖິຕິທົດສອບຄວາມແຕກຕ່າງ (Chi-Square) ໃຊ້ໃນການຊອກຫາຄວາມແຕກຕ່າງລະຫວ່າງສອງກຸ່ມຕົວຢ່າງມີຄວາມແຕກຕ່າງກັນຫຼືບໍ່ເຊັ່ນ: ຊົນເຜົ່າ-ການເລືອກສະຖານທີ່ເຮັດວຽກ, ອາຍຸ-ການເລືອກສະຖານທີ່ເຮັດວຽກ, ເພດ-ການເລືອກສະຖານທີ່ເຮັດວຽກ, ສະຖານທີ່ຕັ້ງຂອງບ້ານເດີມ-ການເລືອກສະຖານທີ່ເຮັດວຽກ , ລະດັບການສຶກສາ-ການເລືອກສະຖານທີ່ເຮັດວຽກ ແລະ ອາຊີບກັບການເລືອກສະຖານທີ່ເຮັດວຽກ. ນອກຈາກນັ້ນ ຍັງໃດ້ນຳໃຊ້ເຂົ້າໃນການສະແດງຄວາມສຳພັນລະຫວ່າງ ລະດັບການສຶດສາ-ໄລຍະທາງໃນການເດີນທາງ, ຮູບແບບຂອງການເດີນທາງ-ການປະກອບອາຊີບ, ລາຍຮັບ-ໄລຍະທາງໄປເຮັດວຽກ ແລະ ສະຖານທີ່ເຮັດວຽກ-ທີ່ຢູ່ອາໄສ.

ສະຖິຕິທົດສອບ ໃຊ້ເຂົ້າໃນການທົດສອບຄວາມແຕກຕ່າງຂອງກຸ່ມຕົວຢ່າງກ່ອນ ແລະ ຫຼັງຂອງການຍົກຍ້າຍ , ເຊິ່ງກຸ່ມຕົວຢ່າງທີ່ນຳມາທົດສອບຈະມີລັກສະນະເປັນຕົວ

ເລກເຊັ່ນ: ລາຍຮັບກ່ອນ ແລະ ຫຼັງ, ລາຍຈ່າຍກ່ອນ ແລະ ຫຼັງ, ໄລຍະທາງໄປຫາສະຖານທີ່ເຮັດວຽກກ່ອນ ແລະ ຫຼັງ ດັ່ງນີ້ເປັນຕົ້ນ. ສະຖິຕິທົດສອບຄວາມສຳພັນ (Correlation analysis) ແມ່ນໄດ້ນຳໃຊ້ເຂົ້າໃນການທົດສອບຕົວປ່ຽນຕ່າງໆທີ່ໃຊ້ເຂົ້າໃນການທົດສອບວ່າມີຄວາມສຳພັນກັນໜ້ອຍຫຼາຍພຽງໃດ ແລ້ວ ຈຶ່ງນຳໄປວິເຄາະໃນຂັ້ນຕອນຕໍ່ໄປ, ຖ້າຕົວປ່ຽນໃດທີ່ມີຄວາມສຳພັນເກີນ 0.7 ແມ່ນຈະໄດ້ຕັດຕົວແປນັ້ນອອກໃນການວິໄຈໃນຂັ້ນຕອນຕໍ່ໄປ.ການນຳໃຊ້ສະຖິຕິ (logistic Regression) ເຂົ້າໃນການທົດສອບຊອກຫາປັດໄຈຕ່າງໆທີ່ສົ່ງຜົນໃຫ້ປະຊາຊົນຢາກກັບໄປເຮັດວຽກຢູ່ບ້ານເກົ່າ ໂດຍການປຽບທຽບຜົນອອກມາກັບກຸ່ມໃດໜຶ່ງ ເຊິ່ງໄລ່ເປັນເທົ່າ ຫຼື ຄິດໄລ່ເປັນສ່ວນຮ້ອຍ ແລະ ດ້ວຍຄ່າຄວາມໜ້າເຊື່ອຖືດ້ານສະຖິຕິ 90, 95 ແລະ 99 ສ່ວນຮ້ອຍ ໂດຍການອ້າງອີງຈາກ Goldberg (1970).

## 3. ຜົນໄດ້ຮັບ

ຜົນທີ່ໄດ້ຮັບຈາກການຄົ້ນຄວ້າ ທີ່ໄດ້ລົງເກັບກຳຂໍ້ມູນໃນຈຳນວນ 250 ຄອບຄົວ ໃນເຂດ ບ້ານແກ້ງກົບ, ບ້ານປາກຊ້ຳ, ບ້ານຖິ່ນ, ບ້ານສະເພີນ, ບ້ານປາກບາກ, ບ້ານກອກ, ບ້ານປາກໂປ້ງ, ບ້ານຄອນຫວາຍ, ບ້ານຫ້ວຍສະທັນ ທີ່ເປັນບ້ານໃໝ່ ຂອງການຕັ້ງຖິ່ນຖານນັ້ນເຫັນວ່າ ເປັນກຸ່ມທີ່ມີຫຼາກຫຼາຍຊົນເຜົ່າ ໂດຍສະເພາະຊົນເຜົ່າກຶມມຸ ເຊິ່ງກວມເອົາສັດສ່ວນຫຼາຍ ທີ່ຍັງຕ້ອງການເຮັດວຽກຢູ່ສະຖານທີ່ເກົ່າ ດ້ວຍຄ່າທາງສະຖິຕິ 0.1 ໂດຍມີລະດັບການສຶກສາທີ່ບໍ່ສູງ. ສະນັ້ນ, ອາຊີບຫຼັກ ກໍ່ແມ່ນເຮັດໄຮ່ນາໃນສະຖານທີ່ເກົ່າ, ແຕ່ເມື່ອມີການຍ້າຍຖິ່ນຖານແລ້ວ ເຫັນວ່າ ມີການປ່ຽນແປງອາຊີບເປັນກຳມະກອນ ແລະ ອາຊີບຮັບຈ້າງອື່ນໆຫຼາຍກວ່າ 70% ແລະ ຫຼາຍກວ່າອາຊີບຊາວນາ, ເນື່ອງຈາກວ່າ ບ້ານໃໝ່ ໃກ້ກັບເຂດຕົວເມືອງກວ່າ, ສະນັ້ນ ລະບົບໂຄງລ່າງພື້ນຖານ ແມ່ນມີການພັດທະນາເຮັດໃຫ້ມີການນຳໃຊ້ຍານພາຫະນະໃນການເດີນທາງໄປເຮັດວຽກຫຼາຍຂຶ້ນ ເຖິງແມ່ນວ່າໄລຍະທາງຈະບໍ່ໄກປານໃດກໍ່ຕາມ ເຊິ່ງສະແດງອອກໃຫ້ເຫັນວ່າ ມີປະຊາຊົນຈຳນວນຫຼາຍ ທີ່ນຳໃຊ້ລົດຈັກ ເພື່ອກັບໄປຫາບ່ອນທຳມາຫາກິນເກົ່າ ດ້ວຍໄລຍະທາງແຕ່ 1 ຫາ 10 ກິໂລແມັດ ດ້ວຍຄ່າຄວາມເຊື່ອໝັ້ນທາງສະຖິຕິຢູ່ 0.01 (99%).

ສ່ວນກ່ຽວຂ້ອງກັບລາຍຮັບສຳລັບກຸ່ມທີ່ເລືອກວຽກເຮັດໃນເຂດໃໝ່ ຈະບໍ່ແມ່ນຈາກກະສິກຳ ແຕ່ເປັນລາຍຮັບມາຈາກດ້ານອື່ນໆ ເຊັ່ນວ່າ: ການຄ້າຂາຍ ແລະ ຮັບຈ້າງຕ່າງໆ ດ້ວຍຄ່າທາງສະຖິຕິ 0.01, ນອກຈາກນີ້ແລ້ວ ຍັງເຫັນວ່າ ກຸ່ມຕົວຢ່າງ ທີ່ດຳເນີນການສຶກສາ ແມ່ນຈະເປັນກຸ່ມທີ່ອາໄສຢູ່ເຮືອນປະເພດ 2 ແລະ 3 ທີ່ເປັນໃນລັກສະນະຄອບ ຄົວຂະໜາດນ້ອຍຫາກາງ, ໃນມິຕິຕ່າງໆເຫຼົ່ານີ້ ສາມາດສະທ້ອນໃຫ້ເຫັນວ່າ ເສດຖະກິດເລີ່ມມີການຂະຫຍາຍຕົວ ແລະ ເຮັດໃຫ້ສັງຄົມຊອງຊົນຊັ້ນນັ້ນ ມີການປ່ຽນແປງໄປພ້ອມກັນ ໂດຍສະເພາະແມ່ນຮູບແບບການເຮັດວຽກ ຫຼື ອາຊີບ ແລະ ສະພາວະຄວາມລົ້ງເຄີຍຕໍ່ກັບເຮືອນຈັດສັນໃໝ່ ອາດຈະໄດ້ມາດຕະຖານກວ່າ ແຕ່ການເຮັດວຽກຍັງຕິດພັນກັບທ້ອງຖິ່ນເກົ່າ.

ສັງລວມແລ້ວ ການານສຶກສານີ້ ສາມາດຮັບຮູ້ບັນຫາຕ່າງໆທີ່ຈະເກີດຂຶ້ນ ແລະ ເພື່ອວາງແຜນຮັບມືແກ້ໄຂເຊັ່ນ: ຮູບແບບບັນຫາຄວາມສ່ຽງຕ່າງໆທີ່ຈະເກີດຂຶ້ນ, ຄວາມຕ້ອງການຂອງຊຸມຊົນ ທີ່ໄດ້ບົ່ງບອກມິຕິດ້ານສັງຄົມ, ອາຊີບ ແລະ ທີ່ຢູ່ອາໄສ, ສິ່ງທີ່ຈະຕ້ອງໄດ້ປັບປຸງແກ້ໄຂ ແລະ ອື່ນໆ ເພື່ອວາງແຜນພັດທະນາທີ່ຢູ່ອາໄສ, ການພັດທະນາໃຫ້ຊຸມຊົນເປັນຊຸມຊົນທີ່ມີຄວາມຍືນຍົງ ແລະ ສາມາດປັບຕົວໄປກັບສະພາບແວດລ້ອມໃໝ່ໄດ້ຢ່າງທ່ວງທັນກັບເວລາ, ປະຊາຊົນຈະສາມາດມີອາຊີບ, ມີບ່ອນທຳມາຫາກິນ, ມີທີ່ຢູ່ອາໄສ ໝັ້ນໜາຖາວອນ ແລະ ສາມາດພັດທະນາກາຍເປັນບ້ານພັດທະນາໄດ້ໃນອະນາຄົດ ແລະ ທີ່ສຳຄັນຄືຈະເຮັດໃຫ້ຄຸນະພາບຊີວິດດີຂຶ້ນກວ່າເກົ່າ.

## 4. ວິພາກຜົນ

ດ້ານຊົນເຜົ່າ ຈາກການສຳຫຼວດພົບວ່າປະຊາຊົນທີ່ຍົກຍ້າຍມາຢູ່ບ້ານໃໝ່ ສ່ວນຫຼາຍແມ່ນເປັນເຜົ່າຂະມຸລາວເທີງເຊິ່ງກວມ 87 ສ່ວນຮ້ອຍ ສ່ວນຊົນເຜົ່າມົ້ງແມ່ນມີໜ້ອຍທີ່ສຸດ ແລະ ຮອງລົງມາແມ່ນຊົນເຜົ່າລາວ, ການຢູ່ອາໄສ ແລະ ການຢູ່ຮ່ວມກັນຂອງ 3 ຊົນເຜົ່ານີ້ແມ່ນມີຄວາມສາມັກຄີປອງດອງກັນດີ ເຊິ່ງສະແດງອອກໃນແຕ່ລະປີຈະໄດ້ມີການຈັດງານບຸນປະເພນີຕາມຮີດຄອງຂອງເຜົ່າເຊັ່ນ: ບຸນເຖືຂອງເຜົ່າຂະມຸ, ງານບຸນກິນຈຽງຂອງເຜົ່າມົ້ງ ແລະ ງານບຸນປະຈຳປີຂອງເຜົ່າລາວເຊັ່ນ: ງານບຸນພະເວດສັນດອນ, ງານບຸນປີໃໝ່ລາວ, ງານບຸນຫໍ່ເຂົ້າສະຫຼາກ, ບຸນຫໍ່ເຂົ້າປະດັບດິນ , ງານບຸນອອກພັນສາ, ງານບຸນປະຈຳບ້ານ ແລະ ງານບຸນອື່ນໆ. ການປະກອບອາຊີບຂອງປະຊາຊົນທີ່ຖືກຍົກຍ້າຍຈາກໂຄງການກໍ່ສ້າງເຂື່ອນໄຟຟ້ານ້ຳຄານ 3 ເຫັນວ່າ ລັກສະນະການປະກອບອາຊີບແມ່ນມີລັກສະນະເໜັງຕີງເປັນບາງສ່ວນ ແລະ ບາງສ່ວນກໍຍັງຮັກສາສະພາບທີ່ໃກ້ຄຽງກັນ ເຊັ່ນ: ອາຊີບພະນັກງານລັດ, ຄ້າຂາຍ ແມ່ນມີລັກສະນະບໍ່ປ່ຽນໄປຈາກເດີມຫຼາຍ. ສ່ວນອາຊີບຊາວກະສິກອນ ຫຼື ຊາວນາ ສ່ວນຫຼາຍແມ່ນໄດ້ຫຼຸດລົງຫຼັງຈາກຍົກຍ້າຍຖິ່ນຖານ, ແຕ່ຈະມາເພີ່ມຂຶ້ນຢູ່ທີ່ ການປະກອບອາຊີບກຳມະກອນເປັນສ່ວນໃຫຍ່ ດັ່ງໃນຕາຕະລາງ 1.

ພາຍຫຼັງການຍົກຍ້າຍ ປະຊາຊົນສ່ວນໜຶ່ງກໍສາມາດປັບໂຕ ເຂົ້າກັບສະພາບແວດລ້ອມໃໝ່ໄດ້ທັນ ແລະ ມີບາງພາກສ່ວນ ກໍຍັງບໍ່ມາດປັບໂຕໃຫ້ເຂົ້າກັບສະຖານທີ່ໃໝ່ໄດ້ຈຶ່ງຈຳເປັນຕ້ອງໄດ້ໄປຊອກຫາທີ່ຢູ່ອາໄສເກົ່າເພື່ອຊອກຫາບ່ອນທຳການຜະລິດ ເຊິ່ງມັນໄດ້ສ້າງຄວາມລຳບາກໃຫ້ເຂົາເຈົ້າໃນການເດີນທາງ ແລະ ຄ່າໃຊ້ຈ່າຍຕ່າງໆກໍເພີ່ມຂຶ້ນລວມທັງເວລາໃນການເດີນທາງອີກດ້ວຍ. ການວິເຄາະພົບວ່າ ການເດີນທາງໄປຫາສະຖານທີ່ເຮັດວຽກ ຈາກເມື່ອກ່ອນ ແລະ ປັດຈຸບັນແມ່ນມີຄວາມແຕກຕ່າງກັນຫຼາຍໂດຍສະເພາະການເດີນທາງທີ່ໃຊ້ໄລຍະທາງຕໍ່າກວ່າ 1km ແມ່ນໄດ້ຫຼຸດລົງ ແລະ ໄດ້ເພີ່ມໄລຍະທາງຂອງການເດີນທາງຂຶ້ນໃນແຕ່ລະຊ່ວງໄປຕາມກັນ, ເຊິ່ງເປັນຜົນເຮັດໃຫ້ປະຊາຊົນຕ້ອງໄດ້ໃຊ້ວິທີການຕ່າງໆ ໃນການເດີນທາງເຂົ້າມາຊ່ວຍ ເຊັ່ນ :ການໄປຕັ້ງສະນຳຢູ່ໃນເຂດພື້ນທີ່ທຳການຜະລິດ ເພື່ອຫຼຸດຜ່ອນຄ່າໃຊ້ຈ່າຍໃນການເດີນທາງລົງ ເຊິ່ງເປັນທິດທາງດຽວກັບການຄົ້ນຄວ້າຂອງ Genevieve (1990) ແລະການປ່ຽນວິທີການເດີນທາງທີ່ຫຼຸດຕົ້ນທຶນລົງໂດຍການຍ່າງ ເຊິ່ງບັນຫາດັ່ງກ່າວນີ້ຈຶ່ງເຮັດໃຫ້ປະຊາກອນມີການຕັ້ງຖິ່ນຖານຢູ່ແບບກະແຈກກະຈາຍ ແລະ ບໍ່ມີພື້ນຖານການດຳລົງຊີວິດທີ່ໝັ້ນຄົງ ເຊິ່ງມັນໄດ້ຂັດກັບ ດຳລັດວ່າດ້ວຍມາດຖານການພົ້ນທຸກ ແລະ ມາດຖານບ້ານພັດທະນາ.

ສຳລັບລາຍຮັບ ແມ່ນໄດ້ມີການຄິດໄລ່ເປັນລາຍເດືອນ ເຊິ່ງໄດ້ມີການອອກແບບສອບຖາມຢູ່ໃນ 4 ລະດັບ, ໃນນັ້ນ ລາຍຮັບຕໍ່າສຸດແມ່ນໄດ້ກຳນົດແຕ່ 200,000-500,000 ກີບ/ເດືອນ ແລະ ລາຍຮັບສູງສຸດແມ່ນກຳນົດແຕ່ 1,000,000 ກີບ/ເດືອນ ຂຶ້ນໄປ .ຜົນຂອງການວິເຄາະເຫັນວ່າ: ກ່ອນການຍົກຍ້າຍ ປະຊາຊົນແມ່ນມີລາຍໄດ້ທີ່ບໍ່ສູງ ເຊິ່ງເຫັນໄດ້ໃນ ຮູບທີ 4 ປະຊາຊົນທີ່ມີລາຍໄດ້ສະເລ່ຍ 200,000-500,000 ກີບ/ເດືອນ ແມ່ນກວມອັດຕະສ່ວນຫຼາຍກວ່າໝູ່ຄື 46% ແລະ ລາຍໄດ້ 1,000, 000ກີບຂຶ້ນໄປມີພຽງແຕ່ 10%. ຖ້າທຽບໃສ່ລາຍຮັບ ຫຼັງການຍົກຍ້າຍປະຊາຊົນແມ່ນມີລາຍຮັບທີ່ສູງຂຶ້ນ ເຊິ່ງສະເລ່ຍ 1,000,000 ກີບຂຶ້ນໄປ ເພີ່ມຂຶ້ນ ກວມ 33% ແລະ ລາຍຮັບສະເລ່ຍ 200,000-500,000 ກີບ/ເດືອນ ຍັງເຫຼືອພຽງແຕ່ 14%. ສະນັ້ນ, ຈຶ່ງເຫັນໄດ້ວ່າ ລາຍຮັບຂອງປະຊາຊົນເພີ່ມຂຶ້ນຫຼາຍຖ້າທຽບໃສ່ກ່ອນການຍົກຍ້າຍຕາມຄ່າ odd ແມ່ນປະມານສອງເທົ່າ ເຊິ່ງກົງກັນຂ້າມກັບຜົນການຄົ້ນຄວ້າຂອງ Genevieve & Kanneth (1970) ທີ່ໄດ້ພິສູດວາສ ລາຍຮັບຂອງຄົນທີ່ຢູ່ຖິ່ນຖານເກົ່າ ຈະສາມາດຫາລາຍຮັບໄດ້ຫຼາຍກວ່າການເຄື່ອນຍ້າຍໄປບ່ອນອື່ນ ເນື່ອງຈາກຄວາມລຶ້ງເຄີຍຂອງທ້ອງຖິ່ນ ແລະ ຂອບເຂດຕະຫຼາດແຮງງານທີ່ມີຢູ່.

ເມື່ອພິຈາລະນາຄວາມສົມດຸນລະຫວ່າງທີ່ຢູ່ອາໄສ ແລະ ບ່ອນເຮັດວຽກດ້ວຍຄວາມສຳພັນເຊື່ອມໂຍງໂດຍການເດີນທາງລະຫວ່າງທີ່ຢູ່ອາໄສ ແລະ ບ່ອນເຮັດວຽກຂອງກຸ່ມຕົວຢ່າງພົບວ່າ: 1) ຜູ້ທີ່ສະຖານທີ່ເຮັດວຽກຢູ່ໃນຂອບເຂດທີ່ໃກ້ຄຽງ ສ່ວນຫຼາຍຈະມີໄລະທາງ 1-3 ກມ ກວມອັດຕະສ່ວນ ຫຼາຍກວ່າໝູ່ ; 2) ຮູບແບບການເດີນທາງສ່ວນຫຼາຍຈະໃຊ້ພາຫະນະປະເພດລົດຈັກ; 3) ຄວາມສຳພັນຂອງທີ່ຢູ່ອາໄສ ແລະ ສະຖານທີ່ເຮັດວຽກໃນຂອບເຂດພື້ນທີ່ສຶກສາຍັງບໍ່ຈະແຈ້ງ. ນອກຈາກນີ້ຜົນຂອງການສຶກຄວາມສົມດຸນລະຫວ່າງທີ່ຢູ່ອາໄສ ແລະ ບ່ອນເຮັດວຽກຂອງກຸ່ມປະຊາກອນ ໃນດ້ານການສຶກສາຍັງພົບວ່າ ຜູ້ທີ່ມີການສຶກສາສູງຈະມີສະຖານທີ່ເຮັດວຽກໄກອອກໄປກວ່າຜູ້ທີ່ມີການສຶກສາຕໍ່າກວ່າ, ໃນນັ້ນອາດຈະເປັນຍ້ອນຜູ້ທີ່ມີການສຶກສາສູງຈະມີຄວາມສາມາດສູງໃນການເລືອກສະຖານທີ່ເຮັດວຽກໃໝ່ໄດ້ຫຼາຍກວ່າຜູ້ທີ່ມີການສຶກສາຕໍ່າກວ່າ ເຊິ່ງສອດຄ່ອງກັບການຄົ້ນຄວ້າຂອງ Weinberg (1984)

ລາຍຮັບ ເມື່ອພິຈາລະນາລາຍໄດ້ກັບການເດີນທາງໄປຫາສະຖານທີ່ເຮັດວຽກ ພົບວ່າຜູ້ທີ່ມີລາຍຮັບຄົວເຮືອນຕໍ່າກວ່າ ແມ່ນມີອັດຕາສ່ວນການເດີນທາງທີ່ໄກ ແລະ ຍາວ ກວ່າຄອບຄົວທີ່ມີລາຍຮັບທີ່ສູງກວ່າ ເຊິ່ງກົງກັນຂ້າມການອ້າງອີງໃນບົດຄວາມຂອງທ່ານ Cervero (Cervero, 1989 ແລະ Cervero, 1996) ທີ່ໄດ້ກ່າວວ່າ ຜູ້ທີ່ມີລາຍຮັບໜ້ອຍມີຄວາມສຳພັນລະຫວ່າງທີ່ຢູ່ອາໄສ ແລະ ບ່ອນເຮັດວຽກກວ່າຜູ້ທີ່ມີລາຍຮັບຫຼາຍ.

## 5. ສະຫຼຸບ

ຄວາມສົມດຸນລະຫວ່າງທີ່ຢູ່ອາໄສ ແລະ ບ່ອນເຮັດວຽກດ້ວຍຄວາມສຳພັນເຊື່ອມໂຍງໂດຍການເດີນທາງລະຫວ່າງທີ່ຢູ່ອາໄສ ແລະ ບ່ອນເຮັດວຽກຂອງກຸ່ມຕົວຢ່າງພົບວ່າ: 1) ຜູ້ທີ່ສະຖານທີ່ເຮັດວຽກຢູ່ໃນຂອບເຂດທີ່ໃກ້ຄຽງ ສ່ວນຫຼາຍຈະມີໄລະທາງ 1-3 ກມ ກວມອັດຕາສ່ວນຫຼາຍກວ່າໝູ່ ; 2) ຮູບແບບການເດີນທາງ ສ່ວນຫຼາຍຈະໃຊ້ພາຫະນະປະເພດລົດຈັກ; 3) ຄວາມສຳພັນຂອງທີ່ຢູ່ອາໄສ ແລະ ສະຖານທີ່ເຮັດວຽກໃນຂອບເຂດພື້ນທີ່ສຶກສາຍັງບໍ່ຈະແຈ້ງ.

ຈາກວິທີການຄຳນວນ ຄວາມສົມດຸນລະຫວ່າງທີ່ຢູ່ອາໄສ ແລະ ບ່ອນເຮັດວຽກ, ສຶກສາຄວາມສຳພັນເຊື່ອມໂຍງດ້ວຍການເດີນທາງລະຫວ່າງທີ່ຢູ່ອາໄສຫາບ່ອນເຮັດວຽກ ດ້ວຍຫຼາຍຮູບແບບການທົດສອບສາມາດສະຫຼຸບໄດ້ວ່າ ພື້ນທີ່ຍັງຂາດຄວາມສົມດຸນລະຫວ່າງທີ່ຢູ່ອາໄສ ແລະ ບ່ອນເຮັດວຽກ.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ


ສະພາແຫ່ງຊາດ. (2017). ດຳລັດວ່າດ້ວຍມາດຖານພື້ນຫຼຸກ ແລະ ມາດຖານພັດທະນາ. ເລກທີ 348/ລບ.

ສະພາແຫ່ງຊາດ. (2012). ກົດໝາຍ ວ່າດ້ວຍການຈັດສັນພູມລຳເນົາ ແລະ ອາຊີບ.

ສະພາແຫ່ງຊາດ. (2016). ກົດໝາຍວ່າດ້ວຍການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນຈາກໂຄງການພັດທະນາ ເລກທີ 84/ລບ.

ກະຊວງພະລັງງານ ແລະ ບໍ່ແຮ່. (2018). ບົດລາຍງານການເຄື່ອນໄຫວຂອງກົມທຸລະກິດພະລັງງານ 6 ເດືອນຕົ້ນປີ 2018 (ເຫຼັ້ມທີ II ແລະ ເຫຼັ້ມທີ III).

ກະຊວງແຜນການ ແລະ ການລົງທຶນ. (2015). ບົດສັງລວມຂໍ້ມູນການພັດທະນາເສດຖະກິດສັງຄົມໃນໄລຍະ 40 ປີ 1975-2015.

ລັດວິສາຫະກິດໄຟຟ້າລາວ. (2012). ບົດສຶກສາສິ່ງແວດລ້ອມ ຂອງໂຄງການກໍ່ສ້າງເຂື່ອນໄຟຟ້າ ນ້ຳຄານ 3.

ລັດວິສາຫະກິດໄຟຟ້າລາວ. (2017ກ). ບົດລາຍງານການຕິດຕາມວຽກງານສິ່ງແວດລ້ອມສັງຄົມຂອງໂຄງການບ້ານຈັດສັນສາມັກຄີໄຊ.

ລັດວິສາຫະກິດໄຟຟ້າລາວ. (2017ຂ). ບົດລາຍງານປະຈຳເດືອນຂອງຫ້ອງການຝ່າຍກໍ່ສ້າງເຂື່ອນ ລັດວິສາຫະກິດໄຟຟ້າລາວ.

Cevero, R. (1989). Jobs-Housing Balancing and Regional Mobility.Journal of America planning Association, 136-150.

Cervero, R. (1996). Jobs-housing balance revisited: Trends and impacts in the San Francisco Bay Area. Journal of the American Planning Association (62):492-511

City of Boulder Planning Department. (2002). Jobs to population balance: A literature review& summary of how other communities have addressed job to population balance, [Online] Available form: http://www.ci.boulder.co.us/buidingservices/job_to pop.pdf. [2003, May 21]

Charles, G & Ben, C. (2017). Impediments to inland resettlement under conditions of accelerated sea level rise, 322-330

Gary, B. (2001). Jobs/housing balance:Strategies for California. Urban land Institute: California, [Online] Available form: http://www.usc.edu/schools/sppd/lusk/professional/summit/2001/pdf/jobhousll,pdf.[2002,June 19]

Genevieve, G. (1991). Is job-housing balance a transportation issue? Transport Research Record, (1035), 305-312

Genevieve, G and Kanneth, A. S. (1970) Is the journey to work explained by urban structure? Unban Studies (30),1485-1500.

Goldberg, A. M. (1970). An economic model of intranmetorpolitan industrial location. Journal of Regional Science (10), 75-79

Weinberg,R. (1984). urban and regional change, migration and commuting-the dynamic of workplace, residence and transport choice. Urban Studies, (21), 15-29


ຕາຕະລາງທີ 1. ສະແດງຜົນຂອງການທົດສອບແບບຈຳລອງ (Logistic Regression Analysis)

| ລ/ດ | ຄວາມໝາຍຂອງຕົວແປ ອິດສະຫຼະ | B | S.E. | Sig. | Odds |
|---|---|---|---|---|---|
| ເພດ(ຍິງ) | ເພດຊາຍ | 0.6 | 0.79 | 0.447 | 1.823 |
| ອາຍຸ(15-20 ປີ) | 21-30 ປີ | -11.93 | 17730 | 0.999 | 0 |
| | 31-40 ປີ | -12.23 | 17730 | 0.999 | 0 |
| | 41-50 ປີ | -12 | 17730 | 0.999 | 0 |
| | 51 ປີຂຶ້ນໄປ | -12.13 | 17730 | 0.999 | 0 |
| ຊົນເຜົ່າ(ລາວລຸ່ມ) | ກຶມມຸ | -2.567 | 1.415 | 0.07* | 0.077 |
| | ມົ້ງ | -0.643 | 2.14 | 0.764 | 0.526 |

| | | | | | |
|---|---|---|---|---|---|
| ບ້ານເດີມ(ແກ້ງກຸ້ງ) | ແກ້ງກີບ | 0.281 | 1.098 | 0.798 | 1.324 |
| | ປາກຊ້າ | 2.931 | 1.355 | 0.031** | 18.75 |
| | ຖິ່ມ | 1.098 | 1.109 | 0.322 | 2.998 |
| | ສະເພີນ | 0.648 | 1.251 | 0.605 | 1.911 |
| | ປາກບາກ | -0.554 | 1.105 | 0.616 | 0.575 |
| | ກອກ | 1.205 | 1.376 | 0.381 | 3.338 |
| | ປາກໂປ້ງ | 1.103 | 1.32 | 0.404 | 3.012 |
| | ຄອນຫວາຍ | 2.26 | 1.597 | 0.157 | 9.584 |
| | ຫ້ວຍສະທັນ | 1.607 | 1.698 | 0.344 | 4.99 |
| ລະດັບການສຶກສາ (ບໍ່ໄດ້ຮຽນ) | ປະຖົມ | -2.52 | 0.958 | 0.009*** | 0.08 |
| | ມັດທະຍົມ | -2.538 | 1.133 | 0.025 | 0.079 |
| | ຊັ້ນສູງ | 18.28 | 40190 | 1.000 | 8.67E+07 |
| | ປະລິນຍາຕີ | 15.09 | 40190 | 1.000 | 3.56E+06 |
| | ປະລິນຍາໂທ | 17.39 | 40190 | 1.000 | 3.58E+07 |
| ອາຊີບບ້ານເກົ່າ (ຊາວນາ) | ຄ້າຂາຍ | -0.908 | 1.823 | 0.618 | 0.403 |
| | ກຳມະກອນ | -1.365 | 1.003 | 0.174 | 0.255 |
| | ພະນັກງານ | 18.44 | 40190 | 1.000 | 1.02E+08 |
| | ບໍ່ມີອາຊີບ | -0.066 | 1.901 | 0.972 | 0.936 |
| | ອື່ນໆ | -0.682 | 1.034 | 0.509 | 0.506 |
| ອາຊີບບ້ານໃໝ່ (ຊາວນາ) | ຄ້າຂາຍ | 2.58 | 2.189 | 0.238 | 13.203 |
| | ກຳມະກອນ | 4.285 | 1.111 | 0.000*** | 72.619 |
| | ພະນັກງານ | -12.57 | 40190 | 1.000 | 0 |
| | ບໍ່ມີອາຊີບ | 2.693 | 1.683 | 0.11 | 14.77 |
| | ອື່ນໆ | 4.555 | 1.232 | 0.000*** | 95.105 |
| ໄລຍະທາງໄປຫາບ່ອນເຮັດວຽກ(ບ້ານເກົ່າ) 0-1 ກມ | 1-3 ກມ | 0.915 | 0.844 | 0.278 | 2.497 |
| | 3-5 ກມ | -0.543 | 1.282 | 0.672 | 0.581 |
| | 5-10 ກມ | 20.08 | 11840 | 0.999 | 5.26E+08 |
| | 10 ກມ ຂຶ້ນໄປ | 0.769 | 0.916 | 0.401 | 2.158 |
| ໄລຍະທາງໄປຫາບ່ອນເຮັດວຽກ(ບ້ານໃໝ່) 0-1 ກມ | 1-3 ກມ | -3.247 | 1.223 | 0.008*** | 0.039 |
| | 3-5 ກມ | -3.868 | 1.352 | 0.004*** | 0.021 |
| | 5-10 ກມ | -5.459 | 1.519 | 0.000*** | 0.004 |
| | 10 ກມ ຂຶ້ນໄປ | -5.226 | 1.376 | 0.000*** | 0.005 |
| ທີ່ມາຂອງລາຍຮັບບ້ານເກົ່າ (ກະສິກຳ) | ຄ້າຂາຍ | 2.593 | 2.338 | 0.267 | 13.373 |
| | ເງິນເດືອນ | -4.39 | 3.06 | 0.151 | 0.012 |
| | ຫາເຄື່ອງປ່າຂອງດົງ | -1.163 | 0.839 | 0.166 | 0.313 |
| | ອື່ນໆ | -2.68 | 1.1 | 0.015** | 0.069 |
| ທີ່ມາຂອງລາຍຮັບບ້ານໃໝ(ກະສິກຳ) | ຄ້າຂາຍ | -0.512 | 1.808 | 0.777 | 0.599 |
| | ເງິນເດືອນ | 1.125 | 1.885 | 0.551 | 3.082 |
| | ຫາເຄື່ອງປ່າຂອງດົງ | -0.098 | 0.958 | 0.919 | 0.907 |
| | ອື່ນໆ | 0.523 | 0.869 | 0.547 | 1.687 |

| | | | | | |
|---|---|---|---|---|---|
| ລາຍຮັບຢູ່ບ້ານເກົ່າ 200,000-500,000 (ກີບ) | 500,000-700,000 | -0.472 | 0.679 | 0.487 | 0.624 |
| | 700,000-1,000,000 | -0.503 | 1.199 | 0.675 | 0.605 |
| | >1,000,000 | 1.002 | 1.134 | 0.377 | 2.723 |
| ລາຍຮັບຢູ່ບ້ານໃໝ່ 200,000-500,000 (ກີບ) | 500,000-700,000 | 1.057 | 0.9 | 0.24 | 2.878 |
| | 700,000-1,000,000 | 0.268 | 0.932 | 0.774 | 1.307 |
| | >1,000,000 | 0.279 | 0.936 | 0.766 | 1.321 |
| ລາຍຈ່າຍຢູ່ບ້ານເກົ່າ 200,000-500,000 (ກີບ) | 500,000-700,000 | 0.232 | 0.889 | 0.794 | 1.261 |
| | 700,000-1,000,000 | 0.907 | 1.955 | 0.643 | 2.476 |
| | >1,000,000 | 16.18 | 19030 | 0.999 | 1.06E+07 |
| ລາຍຈ່າຍຢູ່ບ້ານໃໝ່ 200,000-500,000 (ກີບ) | 500,000-700,000 | 0.431 | 0.75 | 0.566 | 1.538 |
| | 700,000-1,000,000 | 0.745 | 1.075 | 0.488 | 2.107 |
| | >1,000,000 | 1.721 | 1.434 | 0.23 | 5.588 |
| ສະຖານທີ່ມັກຢູ່ປະຈຳ (ເຮືອນຈັດສັນ) | ສະນຳ | -3.077 | 0.911 | 0.001*** | 0.046 |
| ແຮງງານໃນຄອບຄົວ (1-2 ຄົນ) | 2-3 ຄົນ | -0.279 | 0.736 | 0.705 | 0.757 |
| | 3-4 ຄົນ | 0.382 | 1.424 | 0.788 | 1.466 |
| | 3-4 ຄົນຂຶ້ນໄປ | 0.96 | 1.469 | 0.514 | 2.611 |
| ເຮືອນທີ່ໄດ້ຮັບ (ປະເພດ1) | ເຮືອນປະເພດ 2 | 4.639 | 2.484 | 0.062* | 103.47 |
| | ເຮືອນປະເພດ 3 | 5.097 | 2.472 | 0.039** | 163.612 |
| | ເຮືອນປະເພດ 1 ພິເສດ | -30.77 | 41900 | 0.999 | 0 |
| ພາຫະນະໄປເຮັດວຽກ (ບ້ານເກົ່າ) ຍ່າງ | ລົດຖີບ | -17.93 | 40190 | 1.000 | 0 |
| | ລົດຈັກ | 2.055 | 0.962 | 0.033** | 7.807 |
| | ເຮືອ | 1.151 | 0.874 | 0.188 | 3.16 |
| ພາຫະນະໄປເຮັດວຽກ (ບ້ານໃໝ່) ຍ່າງ | ລົດຈັກ | -0.55 | 0.718 | 0.443 | 0.577 |
| | ເຮືອ | -3.019 | 1.108 | 0.006*** | 0.049 |
| ຄວາມຄິດເຫັນ(ດີ) | ບໍ່ດີ | 1.386 | 1.267 | 0.274 | 3.999 |
| | ປານກາງ | 0.205 | 0.618 | 0.741 | 1.227 |
| Cons_ | | 11.54 | 17730 | 0.999 | 1.02E+05 |

$***p<0.01$ $**p<0.05$ $*p<0.1$




ຮູບທີ 1 ສະຖິຕິກຳລັງການຕິດຕັ້ງເຂື່ອນໄຟຟ້ານ້ຳຕົກໃນແຕ່ລະໄລຍະ

*ທີ່ມາ: ຈາກບົດສັງລວມຂໍ້ມູນການພັດທະນາເສດຖະກິດສັງຄົມ ໃນໄລຍະ 40 ປີ 1975-2015 (ກະຊວງແຜນການ ແລະ ການລົງທຶນ)*




ຮູບພາບທີ 1 ສະແດງລັກສະນະຂອງຊົນເຜົ່າ




ຮູບທີ 2 ສະແດງໄລຍະທາງໄປຫາສະຖານທີ່ເຮັດວຽກ




ຮູບທີ 3 ສະແດງລັກສະນະການປະກອບອາຊີບກ່ອນ ແລະ ຫຼັງການຍົກຍ້າຍ




ຮູບທີ 4 ສະແດງລາຍຮັບແຕ່ລະເດືອນກ່ອນ ແລະ ຫຼັງຍົກຍ້າຍ




ຮູບທີ 5 ສະແດງລາຍຈ່າຍແຕ່ລະເດືອນກ່ອນ ແລະ ຫຼັງຍົກຍ້າຍ




ຮູບທີ 6 ທີ່ມາຂອງແຫຼ່ງລາຍຮັບ ກ່ອນ ແລະ ຫຼັງຍົກຍ້າຍ




ຮູບທີ 7 ພາຫະນະທີ່ໃຊ້ໃນການເດີນທາງກ່ອນ ແລະ ຫຼັງການຍົກຍ້າຍ